ສ່ວນພະຍາກົງກາງຣາດ (ຜູ່ເປັນລຸງ) ນັ້ນ ພຣະອົງທົງແຕ່ງຕັ້ງໃຫ້ເປັນແສນເມືອງ. ຄັນສຳເຣັດບໍຣະບວນແລ້ວ ພຣະໂພທິສາລະທັມມິກະຣາດ ພຣະຣາຊບິດາ ກໍທົງບໍຣິຈາກຣາຊຊັບ ອັນເອົາເມືອແຕ່ນະຄອນຊຽງທອງ ແລະ ທີ່ເສນາອາມາດນະຄອນຊຽງໃຫມ່ເອົາມາຖວາຍ ອອກໃຫ້ທານແກ່ພຣະສົງຄະເຈົ້າ ແລະ ຍາຈົກວັນນິພົກ ຄົນອະນາຖາ ເປັນອັນມາກ.

ໃນເວລາທີ່ພຣະໂພທິສາລະຣາດເຈົ້າ ປະທັບຢູ່ເມືອງຊຽງໃຫມ່ນີ້ ສົມເດັດພຣະເຈົ້າບຸເຣັງນອງ (ຫລື ມັນທາຕຸຣາດ) ເຈົ້າແຜ່ນດິນເມືອງຕອງອູ (ພະມ້າ) ໄດ້ສົ່ງທູດມາຂໍຂອດພຣະຣາຊໄມຕຣີ ແລະ ເຈົ້າຕອງອູ ໄດ້ສົ່ງສານມາຊັກຊວນ ພຣະໂພທິສາລະຣາດເຈົ້າ ໄປຕີເອົາເມືອງອະຍຸທຍາ ພຣະອົງຈຶ່ງແຕ່ງໃຫ້ຫມື່ນຂວາ ກັບນາຍປະທຽບວິຊຸນ ໄປສືບຄວາມເມືອງ ພ້ອມກັບທູດພະມ້າທີ່ມານັ້ນ.

ສົມເດັດພຣະໂພທິສາລະຣາດເຈົ້າ ປະທັບຢູ່ເມືອງຊຽງໃຫມ່ນີ້ ພໍສົມຄວນແລ້ວ ກໍສະເດັດຄືນມານະຄອນຊຽງທອງ ແລະ ພຣະອົງໄດ້ເຊີນເອົາ ພຣະແກ້ວມໍຣະກົດ ກັບພຣະແຊກຄຳ ທີ່ສະຖິດຢູ່ໃນວິຫານວັດບຸບຜາຣາມມານຳ. ຄັນມາເຖິງເມືອງຂາຍ ກໍຢຸດພັກຣີພົນຢູ່ທີ່ນັ້ນ ຈຶ່ງມີພຣະຣາຊອາດຍາໃຫ້ຫມໍຊ້າງທັງຫລາຍ ໄປໄລ່ຊ້າງປ່າທີ່ດອນກາງຂອງ ແລະ ພູເຍີຍ ຕລອດມາເຖິງບ້ານຫມໍ້ຊຽງຂາມໃຫ້ມາເຂົ້າພະນຽດ ມີຊ້າງປ່າມາເຂົ້າພະນຽດເຖິງ 2.000 ຕົວ.

ຝ່າຍພະຍາວຽງ ກັບແສນນະຄອນ ທີ່ໄປຕີເອົາວຽງພະບົງ ຈັບຕົວເຈົ້າເມືອງໄດ້ ແລະ ໄດ້ຊ້າງ 1.000 ຕົວ ກັບຄອບຄົວ 20.000 ຄົນ ກໍນຳມາຖວາຍພຣະໂພທິສາລະຣາດເຈົ້າ ທີ່ເມືອງຂາຍນັ້ນ. ຄັນບໍຣະບວນແລ້ວ ພຣະອົງຈຶ່ງມີພຣະຣາຊອາດຍາໃຫ້ ພຣະມະເຫສີສະເດັດມາທາງບົກ ສ່ວນພຣະອົງສະເດັດມາທາງເຮືອ. ຄັນເຖິງພຣະນະຄອນ ກໍຂຶ້ນປະທັບຢູ່ໂຮງຊຽງໃຫມ່ຍອດນະຄອນ, ຝ່າຍເຈົ້າມັນທາຕຸຣາດ ພຣະເຈົ້າແຜ່ນດິນພະມ້າ ຈຶ່ງແຕ່ງໃຫ້ ນ້ອຍມັງເຈັຽ 1 ຣາຊາທິມາດ 1 ສີກະບູນ 1 ຍີ່ຄຳສີ 1 ເປັນທູດ ເຊີນພຣະຣາຊສານ ແລະ ເຄື່ອງຣາຊບັນນາການ ມາຈະເຣີນທາງໄມຕຣີ ພ້ອມກັບຫມື່ນຂວາ ແລະ ນາຍປະທຽບວິຊຸນ. ເວລານັ້ນ ມີທູດຕ່າງປະເທດມາເຖິງນະຄອນຊຽງທອງ ເຖິງ 15 ເມືອງ ເພື່ອເຂົ້າເຝົ້າພຣະໂພທິສາລະຣາດເຈົ້າ. ພຣະໂພທິສາລະຣາດເຈົ້າ ມີພຣະປະສົງຈະໃຫ້ທູດພະມ້າ ແລະ ເມືອງອື່ນໆ ເຂົ້າເຝົ້າພ້ອມກັນຢູ່ສນາມຄ້ອງຊ້າງຫລວງ ເພື່ອໃຫ້ພວກທູດທັງຫລາຍໄດ້ຊົມຝີພຣະຫັດໃນການຄ້ອງຊ້າງ ຈຶ່ງມີພຣະຣາຊອາດຍາສັ່ງໃຫ້ ພວກທູດລໍຖ້າຢູ່ ພໍໃຫ້ຫມໍຊ້າງທັງຫລາຍໄລ່ຊ້າງປ່າມາຮອດກ່ອນ. ພໍຫມໍຊ້າງໄລ່ຊ້າງປ່າມາເຂົ້າພະນຽດໃນສນາມແລ້ວ ພຣະອົງກໍສະເດັດຂຶ້ນຂີ່ຊ້າງພັງ ຊື່ນາງກາຍ ອັນເປັນຊ້າງຕໍ່ ອອກໄປສະຖິດຢືນຢູ່ກາງສນາມ. ພຣະຍາອໍຣະຊຸນກັບພຣະຍາສຣີສັດທັມມະໄຕໂລກ ກໍພາແຂກເມືອງທັງຫລາຍເຂົ້າໄປເຝົ້າຖວາຍບັງຄົມຢູ່ສນາມນັ້ນຄັນເສັດພິທີຮັບທູດແຂກເມືອງແລ້ວ ພຣະອົງກໍຖຸ້ມບ້ວງບາດຄ້ອງຊ້າງປ່າ, ພໍເຊືອກບ້ວງບາດຖືກຊ້າງປ່າ